ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສັກວັກຊີນກັນພະຍາດໂຄວິດ-19




ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປີດຂະບວນການສັກຢາວັກຊີນກັນພະຍາດ ໂຄວິດ-19 ໃຫ້ບຸກຄົນໃນກຸ່ມເປົ້າໝາຍທີ່ມີຄວາມສ່ຽງສູງ ຮອບທີ 1 ໃນລະຫວ່າງວັນທີ 17 ຫາ 20 ມີນາ 2021 ທີ່ ໂຮງໝໍເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມ ແລະ ສັກວັກຊີນດັ່ງກ່າວຂອງ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະຜູ້ວ່າການ ແລະ ພະນັກງານຈຳນວນໜຶ່ງໃນກຸ່ມທີ່ມີຄວາມສ່ຽງສູງ.

ການສັກຢາວັກຊີນກັນພະຍາດ ໂຄວິດ-19 ຄັ້ງນີ້ ແມ່ນປະຕິບັດຕາມແຜນວຽກງານອັນລະອຽດທີ່ກະຊວງສາທາລະນະສຸກວາງອອກໃນການໃຫ້ບໍລິການວັກຊີນດັ່ງກ່າວຢູ່ ສປປ ລາວ ເພື່ອຫຼຸດຜ່ອນການເຈັບເປັນ ແລະ ການເສຍຊີວິດຈາກການລະບາດຂອງພະຍາດນີ້ ທັງເປັນການຫຼຸດຜ່ອນສະພາວະກົດດັນທາງສັງຄົມ ແລະ ເສດຖະກິດ, ຮັບປະກັນສືບຕໍ່ການໃຫ້ບໍລິການທີ່ຈຳເປັນ, ລະບົບສາທາລະນະສຸກເຄື່ອນໄຫວເປັນປົກກະຕິ ແລະ ແຜນແບ່ງປັນຢາວັກຊີນກັນພະຍາດໂຄວິດ-19 ແລະ ການຕົກລົງເຫັນດີເປັນເອກະພາບຂອງຄະນະນຳ ທຫລ ກໍ່ຄືຄວາມສະໝັກໃຈຂອງບຸກຄົນໃນກຸ່ມເປົ້າໝາຍທີ່ມີຄວາມສ່ຽງສູງໃຫ້ໄດ້ຮັບການສັກວັກຊີນດັ່ງກ່າວ ແລະ ທຸກຄົນມີສຸຂະພາບດີ, ເປັນພະນັກງານການນຳ ແລະ ວິຊາການ ທຫລ ທີ່ໄດ້ຮັບການສັກຢາວັກຊີນຊີໂນຟາມຈາກ ສປ ຈີນ; ການໃຫ້ວັກຊີນໃນກຸ່ມທີ່ມີຄວາມສ່ຽງສູງ ຮອບທີ 1 ຂອງ ທຫລ ຄັ້ງນີ້, ບັນດາຄະນະແພດກໍ່ໄດ້ກວດ, ໃຫ້ຄຳແນະນຳແກ່ຜູ້ທີ່ຮັບການບໍລິການວັກຊີນ ທັງກ່ອນຮັບ-ຫຼັງຮັບວັກຊີນໃນການປະຕິບັດຕາມເງື່ອນໄຂ ແລະ ຂໍ້ຫ້າມຕ່າງໆເພື່ອໃຫ້ໄດ້ຮັບຜົນດີໃນຕໍ່ໜ້າ.

ທ່ານນາງ ດຣ. ລັດສະໝີ ວົງຄຳຊາວ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່ ກະຊວງສາທາລະນະສຸກໄດ້ຖະແຫຼງຂ່າວໃນວັນທີ 14 ມີນາ 2021 ວ່າ: ສຳລັບການສັກຢາວັກຊີນກັນພະຍາດໂຄວິດ-19 ນີ້ ແມ່ນແກ້ໄຂພາວະສຸກເສີນຈາກການລະບາດພະຍາດດັ່ງກ່າວ ຊຶ່ງໄດ້ສຸມໃສ່ກຸ່ມເປົ້າໝາຍເປັນບູລິມະສິດກ່ອນ ເປັນຕົ້ນພະນັກງານແພດໝໍ, ພະນັກງານປະຈຳຢູ່ຊາຍແດນ ລວມທັງຜູ້ທີ່ເຮັດວຽກຢູ່ສູນຈຳກັດບໍລິເວນນັບແຕ່ສູນກາງຮອດທ້ອງຖິ່ນ; ມາເຖິງປະຈຸບັນນີ້, ໄດ້ສັກຢາຮອບທີ 1 ໃຫ້ແກ່ບຸກຄົນກຸ່ມເປົ້າໝາຍຫຼາຍກວ່າ 40.700 ຄົນ

(ເປັນຕົວເລກທີ່ບັນທຶກໄວ້) ປະກອບດ້ວຍແພດໝໍ 13.500 ຄົນ, ພະນັກງານທີ່ເຮັດວຽກທີ່ມີຄວາມສ່ຽງ 22.791 ຄົນ, ຜູ້ເດີນອອກນອກປະເທດທີ່ມີຄວາມຈຳເປັນ 625 ຄົນ, ອາຍຸສູງກວ່າ 60 ປີ 220 ຄົນ, ຜູ້ທີ່ມີພະຍາດປະຈຳຕົວ 31 ຄົນ ແລະ ກຸ່ມອື່ນໆ 4.060 ຄົນ; ຜ່ານການສັກຢາວັກຊິນດັ່ງກ່າວ ທຸກຄົນບໍ່ມີຜົນຂ້າງຄຽງຫຍັງ, ມີປະສິດທິພາບ-ປະສິດທິຜົນສູງ.





ປະຈຸບັນ, ການຕິດເຊື້ອໃໝ່ໃນທົ່ວໂລກແມ່ນມີທ່າອ່ຽງຫຼຸດລົງ ໂດຍສະເພາະ ສປປ ລາວ ຍ້ອນວ່າລັດຖະບານ, ຄະນະສະເພາະກິດ, ເຈົ້າໜ້າທີ່, ແພດໝໍ ແລະປະຊາຊົນ ໄດ້ຮ່ວມມືສະກັດກັ້ນ, ຕ້ານ ແລະ ປ້ອງກັນພະຍາດດັ່ງກ່າວຢ່າງເຂັ້ມງວດ; ຂໍໃຫ້ທຸກຄົນສືບຕໍ່ປະຕິບັດ "ຢູ່ຫ່າງ-ລ້າງມື-ໃສ່ແພອັດປາກ" ກາຍເປັນກິດຈະວັດປະຈຳວັນຂອງທຸກໆຄົນ; ໃນຂະນະນີ້ບັນດາແຂວງໃນທົ່ວປະເທດພວມເປີດຂະບວນການສັກຢາວັກຊິນກັນພະຍາດໂຄວິດ-19 ໃຫ້ກຸ່ມເປົ້າໝາຍທີ່ມີຄວາມສ່ຽງສູງ ຮອບທີ 1 ໃຫ້ເປັນຂະບວນຕາມແຜນຂອງກະຊວງສາທາລະນະສຸກ ແລະ ກໍ່ຈະມີການສັກວັກຊິນດັ່ງກ່າວ ຮອບທີ 2 ຕື່ມອີກໃນມື້ໆນີ້.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ